ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ:0 0 8 3 / 2 2 - ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 18 ມີນາ 2022

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2022, ທີ່ຈັດຂຶ້ນໃນວັນທີ 18 ມີນາ 2022

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງ ວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2022 ທີ່ຈັດຂຶ້ນໃນວັນທີ 18 ມີນາ 2022 ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນດັ່ງນີ້:

1. ຮັບຮອງຜົນການດຳເນີນການ ແລະ ລາຍງານປະຈຳປີ 2021 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ
2. ຮັບຮອງເອກະສານລາຍງານການເງິນ ປະຈຳປີ 2021 ທີ່ຜ່ານການກວດສອບ ຈາກບໍລິສັດກວດສອບພາຍນອກແລ້ວ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
3. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2021 ພາຍຫຼັງຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈ່າຍສະສົມໄວ້ໃນຊຸມປີທີ່ຜ່ານມາໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນດັ່ງນີ້:

- ຈຳນວນຮຸ້ນທັງໝົດ 400.000.000 ຮຸ້ນ
- ມູນຄ່າກຳນົດ 100 ກີບຕໍ່ຮຸ້ນ
- ຈ່າຍປັນຜົນໃນອັດຕາ 5,7 ກີບຕໍ່ຮຸ້ນ
- ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.280.000.000 ກີບ
- ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນພາຍໃນ 30 ວັນ ຫຼັງຈາກກອງປະຊຸມຜູ້ຖືຮຸ້ນອະນຸມັດ
- ການອະນຸມັດເງິນປັນຜົນຕ້ອງສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນປະຈຳປີເພື່ອອະນຸມັດ.

4. ແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
5. ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ສຳລັບປີ 2022 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
6. ກຳນົດວັນທີ **01 ເມສາ 2022** ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນຂອງບໍລິສັດ ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2021.
7. ກຳນົດເອົາວັນທີ **28 ເມສາ 2022** ເວລາ 9.30 ໂມງ ເປັນມື້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021 ແລະ ອະນຸມັດວາລະກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2021 ໂດຍມອບໃຫ້ຜູ້ອຳນວຍການໃຫຍ່ເປັນຜູ້ກະກຽມກອງປະຊຸມດັ່ງກ່າວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

(ທ່ານ ມານິບ ຕຣີລິດວິໄລ)